# ການຍ່າງໄປໂຮງຮຽນເດືອນຕຸລາ

## ການໄປສົ່ງແລະໄປຮັບລູກຂອງທ່ານຈາກໂຮງຮຽນຢ່າງປອດໄພ

### ຮຽນພໍ່ແມ່ຜູ້ປົກຄອງ:



ດຽວນີ້ແມ່ນເວລາຂອງປີໃນການເລີ່ມວາງແຜນວ່າທ່ານຈະໄປສົ່ງ ແລະ ໄປຮັບລູກຂອງທ່ານຈາກໂຮງຮຽນແນວໃດ. ການຈາລະຈອນກ່ອນແລະຫຼັງເລີກຮຽນສາມາດສ້າງຄວາມຄຽດໄດ້, ແລະມັກຈະກໍ່ໃຫ້ເກີດອັນຕະລາຍຕໍ່ກັບລູກຫຼານຂອງທ່ານໄດ້. ແຕ່ຢ່າລືມວ່າ ມີທາງເລືອກອື່ນສຳລັບການໄປສົ່ງ ແລະໄປຮັບລູກຂອງທ່ານຈາກໂຮງຮຽນທີ່ສາມາດໃຫ້ປະໂຫຍດແກ່ທຸກໆຄົນ.

### ຍ່າງ ຫຼື ຂີ່ລົດຖີບໄປໂຮງຮຽນ

ຖ້າທ່ານອາໃສຢູ່ໃກ້ໂຮງຮຽນ, ຈົ່ງພິຈາລະນາຍ່າງ ຫຼື ຂີ່ລົດຖີບນຳລູກຂອງທ່ານໄປໂຮງຮຽນ. ຖ້າພວກເຂົາໃຫຍ່ພໍ, ໃຫ້ພວກເຂົາຍ່າງ ຫຼື ຂີ່ລົດຖີບໄປໂຮງຮຽນກັບໝູ່ເພື່ອນ. ນັກຮຽນຜູ້ທີ່ຍ່າງ ຫຼື ຂີ່ລົດຖີບໄປໂຮງຮຽນ ມາຮອດໂຮງຮຽນດ້ວຍຄວາມຕື່ນຕົວ ແລະ ພ້ອມຮຽນໜັງສື.

### ຈອດລົດຢູ່ໃນໄລຍະຫ່າງຈາກໂຮງຮຽນສອງສາມຊ່ວງຕຶກ ແລະ ຍ່າງໄປໂຮງຮຽນຈາກທີ່ນັ້ນ

ການຍ່າງກັບລູກຂອງທ່ານໄປໂຮງຮຽນຊ່ວຍຫຼຸດຜ່ອນການຈາລະຈອນຕິດຂັດຢູ່ບໍລິເວນໂຮງຮຽນ, ໃຫ້ທ່ານ ແລະ ລູກຂອງທ່ານມີໂອກາດໃນການໃຊ້ເວລາທີ່ມີຄ່າຮ່ວມກັນ, ແລະ ໃຫ້ທ່ານທັງສອງໄດ້ອອກກຳລັງກາຍໄປໃນຕົວ.

### ການຮ່ວມຂີ່ລົດນຳກັນກັບເພື່ອນບ້ານ

ຊອກຫາຄອບຄົວອື່ນໃນຄຸ້ມບ້ານຂອງທ່ານ ທີ່ສົນໃຈຜັດປ່ຽນກັນຂັບລົດໄປສົ່ງ ແລະໄປຮັບລູກຫຼານຂອງທ່ານຈາກໂຮງຮຽນ. ສິ່ງນີ້ຊ່ວຍຫຼຸດຜ່ອນຄວາມແອອັດຂອງການຈາລະຈອນຢູ່ບໍລິເວນໂຮງຮຽນ, ແລະ ໃຫ້ທ່ານມີເວລາຫຼາຍຂຶ້ນໃນການເຮັດສິ່ງອື່ນໃນຕອນເຊົ້າ ຫຼື ຕອນແລງ.

### ລົດເມ ຫຼື ການຂົນສົ່ງສາທາລະນະ

ການຈົດທະບຽນລູກຂອງທ່ານເຂົ້າໃນໂຄງການລົດເມໂຮງຮຽນ ຫຼື ການໃຫ້ເດັກທີ່ໃຫຍ່ແລ້ວ ໃຊ້ການຂົນສົ່ງສາທາລະນະແມ່ນວິທີທີ່ງ່າຍ ແລະ ປອດໄພສຳລັບລູກຫຼານຂອງທ່ານ ໃນການໄປໂຮງຮຽນ, ໂດຍສະເພາະແລ້ວ ສຳລັບຜູ້ທີ່ອາໃສຢູ່ຫ່າງໄກເກີນທີ່ຈະຍ່າງ ຫຼື ຂີ່ລົດຖີບໄດ້. ເດັກທີ່ໃຫຍ່ກວ່າ ທີ່ໃຊ້ການຂົນສົ່ງສາທາລະນະສາມາດລົງກ່ອນຮອດໂຮງຮຽນກໍ່ໄດ້ ແລະ ຈາກນັ້ນ ຍ່າງໄປໂຮງຮຽນໃນໄລຍະທາງ ທີ່ເຫຼືອ ຖ້າບໍລິເວນນັ້ນມີຄວາມປອດໄພ.




### ຂັບລົດຢ່າງປອດໄພ

ຖ້າທ່ານເລືອກທີ່ຈະຂັບລົດໄປສົ່ງລູກຂອງທ່ານເອງຢູ່ໂຮງຮຽນ, ກະລຸນາ ຂັບຢ່າງຊ້າໆ ແລະຢ່າງປອດໄພໃນບໍລິເວນເຂດໂຮງຮຽນ. ເດັກນ້ອຍບໍ່ສາມາດຄາດເດົາໄດ້ ແລະ ອາດຈະຍາກທີ່ທ່ານຈະແນມເຫັນພວກເຂົາ ໃນເວລາທີ່ພວກເຂົາຍ່າງ ຫຼື ຂີ່ລົດຖີບໄປໂຮງຮຽນ. ໃນເວລາ

ທີ່ທ່ານໄປສົ່ງ ຫຼື ໄປຮັບລູກຂອງທ່ານ, ກະລຸນາ ນຳໃຊ້ແຄມຖະໜົນສຳລັບຈອດລົດໂຮງຮຽນ ແລະ ບໍ່ຈອດລົດຊ້ອນກັນ ຫຼື ຕິດຈັກລົດຈອດໄວ້, ເພາະວ່າສິ່ງນີ້ຈະເພີ່ມຄວາມແອອັດຂອງການຈາລະຈອນບໍລິເວນອ້ອມໂຮງຮຽນ ແລະ ສ້າງມົນລະພິດທາງອາກາດ.

ກະລຸນາ ພິຈາລະນາໃຊ້ໜຶ່ງໃນບັນດາທາງເລືອກຂ້າງເທິງໃນການໄປສົ່ງແລະໄປຮັບລູກຫຼານຂອງທ່ານຈາກໂຮງຮຽນ. ການເລືອກຂອງທ່ານຈະຊ່ວຍປັບປຸງສຸຂະພາບ ແລະ ຄວາມປອດໄພຂອງທຸກໆຄົນ, ລວມທັງລູກຫຼານຂອງທ່ານເອງ.

ດ້ວຍຄວາມຮັກແພງ,